# ໃບຕິດຕາມເອກະສານ

## ຂາເຂົ້າຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເອກະສານຈາກ.................................................ເລກທີ.........., ລົງວັນທີ......................

ຂາເຂົ້າກົມເລກທີ.......0987.............ລົງວັນທີ..........28. 9-23..........................................

ເລື່ອງ.....ໂຄງການເສີມ ໄຫວທຸລະກິດ ກຸ່ມ ຄາວ ລວງ ທັງໝວຍ ທຸລະກິດ ທີ່ບໍ່ໄດ້ເຂົ້າມາໜັບ
.....ແລະ ເຂົ້າໄປແລ້ວມອບວາງທາງບ ຕາມ ລະບຽບກົດໝາຍ.....
..........................................................................................................................
..........................................................................................................................

| ຄຳເຫັນ | ຄຳເຫັນ |
|---|---|
| ທ່ານ ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ | ທ່ານ ຮອງຫົວໜ້າກົມທະບຽນແລະຄຸ້ມຄອງວິສາຫະກິດ |
| | ND: V: ສົ່ງ<br>28/9/2023 |

ຜູ້ບັນທຶກປະຈຳ

ຜູ້ບັນທຶກແທນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

0987
28.9.23

ເລກທີ 1603/ພອຄນວ.ຫຄວ

ລົງວັນທີ 28/ ກັນຍາ 2023

# ແຈ້ງການ

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ;

- ຫົວໜ່ວຍວິສາຫະກິດທີ່ມີລາຍຊື່ຕາມແຈ້ງການສະບັບນີ້.

ເລື່ອງ: ໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຂອງ ຫົວໜ່ວຍວິສາຫະກິດທີ່ບໍ່ໄດ້ເຂົ້າມາພົວພັນ ແລະ ເຂົ້າໄປແຈ້ງ-ມອບອາກອນຕາມລະບຽບກົດໝາຍ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;

- ອີງຕາມ ໜັງສືສະເໜີ ສະບັບເລກທີ 0819/ສອ.ນວ, ລົງວັນທີ 13 ກໍລະກົດ 2023.

ເພື່ອປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງວາງອອກ ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຈຶ່ງແຈ້ງມາຍັງບັນດາພາສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດຈຳນວນ **480** ຫົວໜ່ວຍ ທີ່ມີລາຍຊື່ຕາມແຈ້ງການສະບັບນີ້ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເນື່ອງຈາກວ່າ ບໍ່ໄດ້ເຂົ້າໄປພົວພັນ ແລະ ເຂົ້າມາແຈ້ງ-ມອບອາກອນຕາມລະບຽບກົດໝາຍ (ລາຍຊື່ວິສາຫະກິດທີ່ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວສາມາດກວດສອບເພີ່ມເຕີມໄດ້ທີ່ www.ned.moic.gov.la ຫຼື **facebook**: ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຫຼື ທີ່ແນບຕິດຢູ່ທ້າຍແຈ້ງການສະບັບນີ້);

2. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ແມ່ນມີຜົນແຕ່ວັນທີ **02 ຕຸລາ 2023** ຫາ ວັນທີ **31 ທັນວາ 2023**;

3. ການໂຈະການເຄື່ອນໄຫວທຸລະກິດມີຜົນທາງກົດໝາຍ ແລະ ທາງປະຕິບັດ ດັ່ງນີ້:

- ວິສາຫະກິດດັ່ງກ່າວບໍ່ສາມາດເຄື່ອນໄຫວທຸລະກິດໄດ້ ແລະ ຕ້ອງນຳໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເກັບຮັກສາໄວ້;
- ຕ້ອງເຂົ້າໄປພົວພັນນຳສ່ວຍສາອາກອນປະຈຳ ນະຄອນຫຼວງວຽງຈັນ ເພື່ອເຂົ້າໄປພົວພັນ ແລະ ເຂົ້າໄປແຈ້ງ-ມອບອາກອນຕາມລະບຽບກົດໝາຍ;

4. ຖ້າພົ້ນກຳນົດເວລາຕາມ ຂໍ້ 2 ເທິງນີ້ ເຈົ້າໜ້າທີ່ທະບຽນວິສາຫະກິດຈະອອກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ແລະ ຍ້າຍຊື່ ແລະ ຂໍ້ມູນທັງໝົດຂອງວິສາຫະກິດໄປຢູ່ບັນຊີບໍ່ມີຕົວຕົນ (AEL);

5. ຫ້າມວິສາຫະກິດທີ່ຖືກໂຈະຕາມແຈ້ງການສະບັບນີ້ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳເອົາໃບທະບຽນວິສາຫະກິດດັ່ງກ່າວ ໄປເຄື່ອນໄຫວທຸລະກິດເດັດຂາດ ຖ້າລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ ຈະຖືກປະຕິບັດມາດຕະການຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າພະແນກ

ກະຊວງອຸດສາຫະກຳ ແລະ ການຄ້າ ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ

ບັນຕາ ສານຸວົງ

ສາມາດກວດສອບລາຍຊື່ວິສາຫະກິດທີ່ຖືກໂຈະ ຈຳນວນ 480 ຫົວໜ່ວຍ

ບ່ອນສົ່ງ:

| | |
|---|---|
| - ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ | 01 ສະບັບ ເພື່ອຊາບ; |
| - ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ | 01 ສະບັບ ເພື່ອໃຊ້ຕາງລາຍງານ; |
| - ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ | 01 ສະບັບ ເພື່ອຊາບ; |
| - ສວຍສາອາກອນ ປະຈຳນະຄອນຫຼວງວຽງຈັນ | 01 ສະບັບ ເພື່ອຊາບ; |
| - ຫ້ອງການອຸດສາຫະກຳ ແລະ ການຄ້າ 09 | 01 ສະບັບ ເພື່ອຕິດຕາມ; |
| - ວິສາຫະກິດທີ່ກ່ຽວຂ້ອງ | 01 ສະບັບ ເພື່ອປະຕິບັດ; |
| - ສຳເນົາ | 01 ສະບັບ ເພື່ອເກັບມ້ຽນ. |